ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ຮັບສະໝັກ ເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ ສູ່ຄວາມສຳເລັດກັບພວກເຮົາ...



❖ **ຕຳແໜ່ງ: ພະນັກງານຂັບລົດສັນຍາຈ້າງ 05 ຕຳແໜ່ງ ປະຈຳ ທຄຕລ ສຳນັກງານໃຫຍ່ ແລະ ສາຂາ.**

**<u>ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ມີຄວາມຕ້ອງການຮັບສະໝັກ ພະນັກງານ ຂັບລົດສັນຍາຈ້າງ ເພື່ອປະກອບໃຫ້ ສຳນັກງານໃຫຍ່ ແລະ ສາຂາ, ດັ່ງມີລາຍລະອຽດລຸ່ມນີ້:</u>**

❖ **ຕຳແໜ່ງ: ພະນັກງານຂັບລົດສັນຍາຈ້າງ 05 ຕຳແໜ່ງ**

➢ **ໜ້າທີ່ຮັບຜິດຊອບຫຼັກ**

- ປະຕິບັດໜ້າທີ່ຂັບລົດຮັບໃຊ້ວຽກງານພາຍໃນສຳນັກງານໃຫຍ່ ແລະ ບັນດາໜ່ວຍບໍລິການ
- ບຳລຸງຮັກສາລົດທີ່ຢູ່ໃນຄວາມຮັບຜິດຊອບ ແລະ ບັນດາອຸປະກອນເຄື່ອງໃຊ້ພາຍໃນລົດໃຫ້ມີຄວາມສະອາດຈົບງາມ
- ກວດສອບສະພາບ ແລະ ຮັກສາລົດໃຫ້ພ້ອມໃຊ້ງານເປັນປະຈຳ
- ວຽກງານອື່ນໆ ທີ່ການຈັດຕັ້ງໄດ້ມອບໝາຍ

➢ **ເງື່ອນໄຂຜູ້ສະໝັກ**

- ເພດ: **ຊາຍ** ອາຍຸ **20-35 ປີ** (ເກີດລະຫວ່າງ **ປີ 1988 ຫາ 2003**)
- ຈົບມັດທະຍົມຕອນຕົ້ນຂຶ້ນໄປ
- ມີໃບອະນຸຍາດຂັບຂີ່ລົດປະເພດ B (Cat B) ຂຶ້ນໄປ ແລະ ຍັງນຳໃຊ້ໄດ້ຢູ່ຈົນເຖິງປະຈຸບັນ (ບໍ່ໝົດອາຍຸການນຳໃຊ້)
- ບໍ່ຕິດທາດເຫຼົ້າ ຫຼື ສິ່ງເສບຕິດໃດໆ
- ບໍ່ເຄີຍຕ້ອງໂທດຄະດີອາຍາ ແລະ ອາດສະຍາກຳອື່ນໆ, ຕິດຄຸກ ແລະ ກ່ຽວຂ້ອງກັບສິ່ງຜິດລະບຽບກົດໝາຍ
- ບໍ່ເຄີຍກະທຳຄວາມຜິດທຸກກໍລະນີທີ່ຜິດກົດໝາຍຂອງ ສປປ ລາວ ຫຼື ຢູ່ໃນຂັ້ນຕອນການດຳເນີນຄະດີໃດໜຶ່ງ.
- ສາມາດເຮັດວຽກນອກໂມງການ, ວັນພັກລັດຖະການ ແລະ ສາມາດໄປວຽກຕ່າງແຂວງໄດ້

➢ **ຄຸນລັກສະນະເພີ່ມຕື່ມຂອງຜູ້ສະໝັກ**

- ມີສຸຂະພາບແຂງແຮງ ແລະ ສາມາດຍົກເຄື່ອງໜັກໄດ້
- ມີປະສົບການໃນການຂັບຂີ່ລົດໃຫຍ່ ແລະ ມີຄວາມຮູ້ກ່ຽວກັບເສັ້ນທາງຕ່າງໆ ເປັນຢ່າງດີ ສາມາດຂັບລົດເສັ້ນທາງໄລຍະໄກໄດ້
- ບໍ່ເຄີຍຖືກໄລ່ອອກ ຫຼື ປະລະໜ້າທີ່ມາກ່ອນ
- ມີຄວາມຫ້າວຫັນ, ກົງຕໍ່ເວລາ, ມີຄວາມເສຍສະຫຼະ ແລະ ຊື່ສັດຕໍ່ໜ້າທີ່ວຽກງານ
- ມີຄວາມຮູ້ການນຳໃຊ້ອຸປະກອນການບຳລຸງຮັກສາລົດ ແລະ ສ້ອມແປງລົດໄດ້
- ມີມະນຸດສຳພັນດີ ແລະ ມີໃຈຮັກໃນການບໍລິການ
- ລະອຽດຮອບຄອບ, ມີຄວາມຮັບຜິດຊອບສູງ ແລະ ກົງຕໍ່ເວລາ
- ເຄົາລົບນັບຖືກົດລະບຽບກົດໝາຍ ແລະ ລະບຽບຈາລະຈອນຢ່າງເຄັ່ງຄັດ

❖ **<u>ວິທີສະໝັກວຽກ</u>**

ຜູ້ທີ່ມີເງື່ອນໄຂຄົບຖ້ວນຕາມການປະກາດ ແລະ ມີຄວາມສົນໃຈແມ່ນໃຫ້ປະກອບເອກະສານໃຫ້ຄົບຖ້ວນດັ່ງນີ້:

1. ຊີວະປະຫວັດເປັນເພົາ 3-4 ໜ້າ (ສະບັບຕົ້ນຈ້ຳກາແດງ ແລະ ບໍ່ເກີນ 3 ເດືອນ)
2. ຮູບຖ່າຍ 3x4 ຈຳນວນ 03 ໃບ (ຖ່າຍບໍ່ເກີນ 3 ເດືອນ)
3. ສຳເນົາບັດປະຈຳຕົວ **ຫຼື** Passport **ແລະ** ສຳມະໂນຄົວ
4. ສຳເນົາໃບຂັບຂີ່ ປະເພດ B (Cat B) ຂຶ້ນໄປ (ຍັງນຳໃຊ້ໄດ້ຈົນເຖິງປະຈຸບັນ, ບໍ່ໝົດອາຍຸ)
5. ສຳເນົາໃບປະກາດ ມໍຕົ້ນ ຫຼື ມໍ ປາຍ ຫຼື ຊັ້ນທີ່ສູງກວ່າ
6. ໃບກວດສຸຂະພາບ (ສະບັບຕົ້ນຈ້ຳກາແດງ ແລະ ບໍ່ເກີນ 6 ເດືອນ)
7. ໃບຢັ້ງຢືນຄໍ້າປະກັນ (ສະບັບຕົ້ນຈ້ຳກາແດງ ແລະ ບໍ່ເກີນ 3 ເດືອນ)
8. ໃບແຈ້ງໂທດ (ສະບັບຕົ້ນຈ້ຳກາແດງ ແລະ ບໍ່ເກີນ 3 ເດືອນ)
9. ໃບຢັ້ງຢືນທີ່ຢູ່ (ສະບັບຕົ້ນຈ້ຳກາແດງ ແລະ ບໍ່ເກີນ 3 ເດືອນ)

1. ພາຍຫຼັງປະກອບເອກະສານຕ່າງໆຢ່າງຄົບຖ້ວນ ຜູ້ສະໝັກສາມາດສົ່ງເອກະສານ ແລະ ພົວພັນເອົາຟອມສະໝັກງານດ້ວຍຕົນເອງໄດ້ ທີ່ **ພະແນກຈັດຕັ້ງ-ພະນັກງານ, ຊັ້ນ 04 ຕຶກ C, ທຄຕລ ສຳນັກງານໃຫຍ່** ຫຼື ໂທສອບຖາມຂໍ້ມູນກ່ອນໄດ້ທີ່ **021 213200** ຕໍ່ **417** ກຳນົດເລີ່ມຮັບເອກະສານສະໝັກຕັ້ງແຕ່ວັນທີ **19/07-04/08/2023** (ວັນ ແລະ ເວລາລັດຖະການ **08:30-15:30** ໂມງ).
2. ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍເອື້ອຍນ້ອງ ຫຼື ພີ່ນ້ອງຂອງຜູ້ສະໝັກງານມາພົວພັນຮັບ-ສົ່ງເອກະສານແທນ.
3. ໃຫ້ນຳເອົາໃບຂັບຂີ່ ສະບັບຕົ້ນ ມານຳໃນເວລາມາສົ່ງເອກະສານ ແລະ ພົວພັນເອົາ-ສົ່ງແບບຟອມສະໝັກງານ.

ນະຄອນຫຼວງວຽງຈັນ, ວັນທີ 18/07/2023

**ຫົວໜ້າພະແນກ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ພະແນກຈັດຕັ້ງ- ພະນັກງານ

ລັດສະໝີ ດຳລົງບຸນ